ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນ ແຂວງໄຊຍະບູລີ

ເລກທີ 15 /ສພຂ.ຊຍ
ໄຊຍະບູລີ, ວັນທີ 17 ເມສາ 2026

# ມະຕິ
# ກອງປະຊຸມສະພາປະຊາຊົນແຂວງ
# ວ່າດ້ວຍການຮັບຮອງເອົາບົດລາຍງານແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສານປະຊາຊົນແຂວງ

- ອີງຕາມ ມາດຕາ 53 ຂໍ້ 13 ຂອງກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ເລກທີ 57/ສພຊ, ລົງວັນທີ 28 ມິຖຸນາ 2024;
- ອີງຕາມ ບົດລາຍງານ ຂອງສານປະຊາຊົນແຂວງໄຊຍະບູລີ ສະບັບເລກທີ 116/ສປຊ.ຊຍ, ລົງວັນທີ 2 ເມສາ 2026.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນ ຂອງສະມາຊິກສະພາປະຊາຊົນແຂວງ ຢ່າງເລິກເຊິ່ງ ຕໍ່ບົດລາຍງານແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສານປະຊາຊົນແຂວງ ໃນວາລະກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ ຊຸດທີ V ຄັ້ງວັນທີ 10 ເມສາ 2026.

## ກອງປະຊຸມ ຕົກລົງ:

**ມາດຕາ 1 ຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສານປະຊາຊົນສານແຂວງ**

ກອງປະຊຸມໄດ້ສະແດງຄວາມຊົມເຊີຍ ແລະ ເຫັນດີຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງສານປະຊາຊົນແຂວງ ທີ່ໄດ້ກຳນົດ 4 ແຜນງານ, 13 ໂຄງການ, 30 ກິດຈະກຳ ຕາມບົດລາຍງານຂອງສານປະຊາຊົນແຂວງ; ເພື່ອຮັບປະກັນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງສານປະຊາຊົນ ຕາມທີ່ລັດຖະທຳມະນູນ ແລະ ກົດໝາຍກຳນົດໄວ້ ແລະ ເຮັດໃຫ້ແຜນການດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດມີຜົນສຳເລັດເປັນຮູບປະທຳ, ກອງປະຊຸມສະເໜີໃຫ້ເອົາໃຈໃສ່ບາງດ້ານເພີ່ມເຕີມ ດັ່ງນີ້:

1. ເພີ່ມທະວີຄວາມຮັບຜິດຊອບໜ້າທີ່ການເມືອງຂອງຄະນະພັກ, ຄະນະນຳ, ສະມາຊິກພັກ ແລະ ພະນັກງານຂອງສານປະຊາຊົນ ໃນການເຊື່ອມຊຶມກຳແໜ້ນ ແລະ ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ, ມະຕິຂອງຄະນະບໍລິຫານງານສູນກາງພັກ ວ່າດ້ວຍການຍົກສູງປະສິດທິພາບການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ສະບັບເລກທີ 037/ຄບສພ, ລົງວັນທີ 18 ມິຖຸນາ 2018, ມະຕິກົມການເມືອງສູນກາງພັກວ່າດ້ວຍ ການຍົກສູງຄຸນນະພາບການດຳເນີນຄະດີຕາມຂະບວນຍຸຕິທຳ ສະບັບເລກທີ 112/ກມສພ, ລົງວັນທີ 02 ມິຖຸນາ 2020, ມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງອົງຄະນະພັກແຂວງ ເຂົ້າໃນການເຄື່ອນໄຫວວຽກງານຕົວຈິງແຕ່ລະໄລຍະຂອງສານປະຊາຊົນແຂວງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;



สแกนด้วย CamScanner

2. ສຸມໃສ່ຍົກສູງຄຸນນະພາບ ການດຳເນີນຄະດີ ຂອງສານປະຊາຊົນແຂວງ ແລະ ສານປະຊາຊົນເຂດ ໃນການພິຈາລະນາຕັດສິນ, ພິພາກສາຄະດີ ໃຫ້ມີຄວາມໂປ່ງໃສ, ທ່ຽງທຳ, ກວດສອບໄດ້; ຮັບປະກັນສິດຂອງຄູ່ຄວາມ, ໂຈດ, ຈຳເລີຍ ແລະ ບຸກຄົນທີສາມ ໃນການແກ້ຂໍ້ກ່າວຫາ ແລະ ສິດໃນການໂຕ້ແຍ່ງ-ໂຕ້ຖຽງ ໃນການດຳເນີນຄະດີ; ການພິຈາລະນາແກ້ໄຂຄະດີ ໃຫ້ມີຄວາມວ່ອງໄວ, ຖືກຕ້ອງຕາມກົດໝາຍ ແລະ ຄວາມເປັນຈິງ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້ ຄື: ຄະດີແພ່ງ-ການຄ້າ 75% ຂຶ້ນໄປ, ຄະດີຄອບຄົວ-ເດັກ-ແຮງງານ 85% ຂຶ້ນໄປ ແລະ ຄະດີອາຍາ 90%  ຂຶ້ນໄປ, ອັດຕາການຂໍອຸທອນ ແຕ່ລະປະເພດຄະດີ ບໍ່ໃຫ້ເກີນ 15%, ອັດຕາການ ຂໍລົບລ້າງ ໃຫ້ຫຼຸດໜ້ອຍລົງ;

3. ສືບຕໍ່ປັບປຸງກົງຈັກການຈັດຕັ້ງ ຂອງສານປະຊາຊົນແຂວງ ແລະ ສານປະຊາຊົນເຂດ-ຕາແສງ ໃຫ້ມີຄວາມເຂັ້ມແຂງໜັກແໜ້ນ, ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ສຶກສາຄວາມເປັນໄປໄດ້ ເພື່ອສະເໜີຄົ້ນຄວ້າການສ້າງຕັ້ງໜ່ວຍງານຂອງສານປະຊາຊົນເຂດປະຈຳເມືອງ ເພື່ອໃຫ້ປະຊາຊົນສາມາດເຂົ້າເຖິງການດຳເນີນຄະດີຂອງສານປະຊາຊົນສະດວກຂຶ້ນ;

4. ສຸມໃສ່ສຶກສາອົບຮົມ ແລະ ບຳລຸງສ້າງບຸກຄະລາກອນຕຸລາການໃຫ້ຫຼາຍຂຶ້ນ ແລະ ມີຄຸນນະພາບ ເປັນຕົ້ນ: ຈ່າສານ, ຜູ້ຊ່ວຍຜູ້ພິພາກສາ ແລະ ຜູ້ພິພາກສາຂອງສານປະຊາຊົນແຂວງ ແລະ ສານປະຊາຊົນເຂດ ໃຫ້ມີຄຸນທາດການເມືອງໜັກແໜ້ນ, ຄຸນສົມບັດສິນທຳປະຕິວັດ, ມີຈັນຍາບັນ, ຈັນຍາທຳ, ມີຄວາມຮູ້ຄວາມສາມາດ, ມີຄວາມຊຳນິຊຳນານດ້ານວິຊາສະເພາະ; ບັນຈຸສັບຊ້ອນ, ສັບປ່ຽນບ່ອນປະຈຳການ ໃຫ້ສອດຄ່ອງກັບລະດັບຄວາມຮູ້, ຄວາມສາມາດ ແລະ ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ໃນແຕ່ລະໄລຍະ;

5. ເອົາໃຈໃສ່ປັບປຸງແບບແຜນວິທີເຮັດວຽກ, ກົນໄກການບໍລິຫານຄະດີຂອງສານ ໃນການດຳເນີນຄະດີ ໃຫ້ມີຄວາມຖືກຕ້ອງ, ໂປ່ງໃສ, ທັນກຳນົດເວລາ ຕາມທີ່ກົດໝາຍກຳນົດໄວ້; ແກ້ໄຂປະກົດການລະເມີດກົດໝາຍໃນການດຳເນີນຄະດີຂອງສານໃຫ້ເຂັ້ມງວດ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ປະຊາຊົນ ໃນການດຳເນີນຄະດີ, ການຕັດສິນ, ພິພາກສາຄະດີຂອງສານປະຊາຊົນແຂວງ ແລະ ສານປະຊາຊົນເຂດ.

**ມາດຕາ 2 ຮັບຮອງເອົາບັນດາມາດຕະການຈັດຕັ້ງປະຕິບັດຂອງສານປະຊາຊົນແຂວງ**

ກອງປະຊຸມເຫັນດີເປັນເອກະພາບ ຕໍ່ການກຳນົດ 4 ມາດຕະການຈັດຕັ້ງປະຕິບັດ ທີ່ສານປະຊາຊົນແຂວງ ກຳນົດໄວ້ໃນບົດລາຍງານ ເພື່ອເຮັດໃຫ້ແຜນການເຄື່ອນໄຫວວຽກງານດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງມີປະສິດທິຜົນ ກອງປະຊຸມສະເໜີບາງມາດຕະການເພີ່ມເຕີມ ດັ່ງນີ້:

1. ຄະນະນຳຂອງສານປະຊາຊົນແຂວງ ຕ້ອງສຸມໃສ່ນຳພາ-ຊີ້ນຳສານປະຊາຊົນແຂວງ ແລະ ສານປະຊາຊົນເຂດ ໃນການຈັດຕັ້ງຜັນຂະຫຍາຍ ແຜນງານ, ໂຄງການ ແລະ ກິດຈະກຳ 5 ປີ (2026-2030) ໃຫ້ສອດຄ່ອງກັບພາລະບົດບາດສິດ ແລະ ໜ້າທີ່ຂອງສານປະຊາຊົນແຂວງ ແລະ ສານປະຊາຊົນເຂດ  ພ້ອມທັງຊຸກຍູ້, ຕິດຕາມກວດກາ ການຈັດຕັ້ງປະຕິບັດໃຫ້ເປັນປົກກະຕິ ແລະ ເຂັ້ມງວດ;

2. ເພີ່ມທະວີວຽກງານການຕິດຕາມກວດກາຂອງສານປະຊາຊົນແຂວງ ແລະ ສານປະຊາຊົນເຂດ ໃນການດຳເນີນຄະດີ ແລະ ການຕິດຕາມກວດກາການປະຕິບັດໜ້າທີ່ຂອງຜູ້ພິພາກສາໃນການດຳເນີນຄະດີ, ການຕັດສິນ ແລະ ພິພາກສາຄະດີໃຫ້ເປັນລະບົບຕໍ່ເນື່ອງ ແນໃສ່ເຮັດໃຫ້ການແກ້ໄຂຄະດີມີຄວາມໂປ່ງໃສ ຮັບປະກັນຄວາມຖືກຕ້ອງຕາມກົດໝາຍ, ສອດຄ່ອງກັບຄວາມເປັນຈິງ ແລະ ມີຄວາມຍຸຕິທຳ;

3. ເພີ່ມທະວີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການດຳເນີນຄະດີ ຂອງແຕ່ລະພາກສ່ວນ ໃຫ້ມີຄວາມກົມກຽວ, ໂລ່ງລ່ຽນ ເພື່ອຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດກົດໝາຍ, ພ້ອມທັງສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ປະຊາຊົນ ສາມາດເຂົ້າເຖິງຂະບວນຍຸຕິທຳ ໄດ້ສະດວກ ແລະ ວ່ອງໄວຂຶ້ນ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

1. ມອບໃຫ້ ສານປະຊາຊົນແຂວງ-ເຂດ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມ



สแกนด้วย CamScanner

ສະຫງົບ ແລະ ຍຸຕິທຳ, ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມະຕິສະບັບນີ້ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນີລັນ ຄຳພັນເພັງ



สแกนด้วย CamScanner